ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ...009..../ປປທ

ນະຄອນຫຼວງວຽງຈັນ, ວັນທີ...5 ມັງກອນ 2024..

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍຜູ້ພິພາກສາ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 109/ສພຊ, ລົງວັນທີ 20 ພະຈິກ 2023 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຜູ້ພິພາກສາ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 39/ຄປຈ, ລົງວັນທີ 20 ທັນວາ 2023.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍຜູ້ພິພາກສາ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 109 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 20 / 11/ 23

**ມະຕິ**

**ຂອງກອງປະຊຸມສະພາແຫ່ງຊາດ**

**ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຜູ້ພິພາກສາ (ສະບັບປັບປຸງ)**

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍຜູ້ພິພາກສາ (ສະບັບປັບປຸງ) ໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 20 ພະຈິກ 2023 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 20 ພະຈິກ 2023.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍຜູ້ພິພາກສາ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 51 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 20 ພະຈິກ 2023

# ກົດໝາຍວ່າດ້ວຍຜູ້ພິພາກສາ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ການເຄື່ອນໄຫວ, ການແຕ່ງຕັ້ງ, ການກຳນົດຊັ້ນ, ການເລື່ອນຊັ້ນ, ເງິນເດືອນ, ເງິນອຸດໜູນ, ການຍົກຍ້າຍ, ການຕິດຕາມ ກວດກາ, ປະເມີນຜົນ ແລະ ການປົດຕຳແໜ່ງ ຜູ້ພິພາກສາ ເພື່ອເຮັດໃຫ້ຜູ້ພິພາກສາ ມີຄວາມຈົງຮັກພັກດີ, ມີຄຸນສົມບັດ ສິນທຳປະຕິວັດ, ມີຄວາມສັດຊື່ບໍລິສຸດ, ມີຈັນຍາບັນ, ຈັນຍາທຳ ແນໃສ່ຮັບປະກັນການປະຕິບັດໜ້າທີ່ໃນການພິຈາລະນາ ຕັດສິນ, ພິພາກສາຄະດີ ໃຫ້ມີ ຄວາມວ່ອງໄວ, ໂປ່ງໃສ, ຖືກຕ້ອງ, ຄົບຖ້ວນ, ພາວະວິໄສ, ປະກອບສ່ວນເຮັດໃຫ້ສັງຄົມ ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ແລະ ຍຸຕິທຳ.

**ມາດຕາ 2 ຜູ້ພິພາກສາ**

ຜູ້ພິພາກສາ ແມ່ນ ຜູ້ພິຈາລະນາຕັດສິນ ແລະ ພິພາກສາຄະດີ ໃນນາມລັດ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສານປະຊາຊົນທ້ອງຖິ່ນ** ໝາຍເຖິງ ສານປະຊາຊົນພາກ, ສານປະຊາຊົນ ແຂວງ, ນະຄອນຫຼວງ, ສານປະຊາຊົນເຂດ;
2. **ລະບົບສານປະຊາຊົນ** ໝາຍເຖິງ ສານປະຊາຊົນສູງສຸດ, ສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ;
3. **ຄະນະກຳມະການ** ໝາຍເຖິງ ຄະນະກຳມະການສອບເສັງ, ຄະນະກຳມະການຕິດຕາມ, ກວດກາ, ຄະນະກຳມະການປະເມີນ;
4. **ການໄຕ່ສວນ** ໝາຍເຖິງ ການສອບຖາມຜູ້ເຂົ້າຮ່ວມໃນການດຳເນີນຄະດີ ໂດຍຄະນະສານໃນທີ່ປະຊຸມສານ;

5. **ຈັນຍາບັນ** ໝາຍເຖິງ ກົດການປະພຶດຕົນຂອງຜູ້ພິພາກສາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

6. **ສະພາຜູ້ພິພາກສາ** ໝາຍເຖິງ ຄະນະນຳຂອງສານປະຊາຊົນສູງສຸດ ຊຶ່ງປະກອບດ້ວຍ ປະທານ, ບັນດາຮອງປະທານ, ຫົວໜ້າຄະນະສານ ແລະ ຜູ້ພິພາກສາຈຳນວນໜຶ່ງ;

7. **ຜູ້ພິພາກສາອາວຸໂສ** ໝາຍເຖິງ ຜູ້ພິພາກສາ ຊັ້ນສາມ ຫຼື ຊັ້ນສີ່ ທີ່ມີອາຍຸຮອດກະສຽນບຳນານ ແລະ ໄດ້ຮັບການຕົກລົງເປັນຜູ້ພິພາກສາອາວຸໂສ ໂດຍປະທານສານປະຊາຊົນສູງສຸດ;

8. **ຄະນະປະທານ** ໝາຍເຖິງ ຄະນະນຳຂອງສານປະຊາຊົນທ້ອງຖິ່ນ ຊຶ່ງປະກອບດ້ວຍ ປະທານ, ບັນດາຮອງປະທານ, ຫົວໜ້າຄະນະສານ ແລະ ຜູ້ພິພາກສາຈຳນວນໜຶ່ງ;

9. **ຄະນະປະທານສານທະຫານ** ໝາຍເຖິງ ຄະນະນຳຂອງສານທະຫານຂັ້ນສູງ ແລະ ສານທະຫານພາກ ຊຶ່ງປະກອບດ້ວຍ ປະທານ, ຮອງປະທານ, ຫົວໜ້າຄະນະສານອາຍາ, ຫົວໜ້າຫ້ອງ ແລະ ຜູ້ພິພາກສາຈຳນວນໜຶ່ງ ຂອງສານທະຫານດັ່ງກ່າວ.

### ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບຜູ້ພິພາກສາ

ລັດ ປົກປ້ອງ, ຄຸ້ມຄອງ, ກວດກາ ແລະ ປະເມີນຜົນການປະຕິບັດໜ້າທີ່ຂອງຜູ້ພິພາກສາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ສ້າງເງື່ອນໄຂໃຫ້ຜູ້ພິພາກສາໄດ້ຮັບການພັດທະນາທາງດ້ານ ການເມືອງ-ແນວຄິດ, ຈັນຍາບັນ, ຈັນຍາທຳ, ຍົກລະດັບຄວາມຮູ້, ວິຊາສະເພາະ, ພາສາຕ່າງປະເທດ ແລະ ປະຕິບັດນະໂຍບາຍອຸດໜູນຢ່າງເໝາະສົມ ເພື່ອຍົກສູງຊີວິດການເປັນຢູ່ ຮັບປະກັນການປະຕິບັດໜ້າທີ່ໃຫ້ສຳເລັດ.

### ມາດຕາ 5 ຫຼັກການການຄຸ້ມຄອງຜູ້ພິພາກສາ

ການຄຸ້ມຄອງຜູ້ພິພາກສາ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຖືກຕ້ອງ, ສອດຄ່ອງກັບ ລັດຖະທຳມະນູນ, ກົດໝາຍ, ນະໂຍບາຍຂອງລັດ;

2. ລວມສູນເປັນເອກະພາບ ໃນຂອບເຂດທົ່ວປະເທດ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ ແລະ ປະສານສົມທົບກັບຂະແໜງການ ຂັ້ນສູນກາງ ແລະ ທ້ອງຖິ່ນ;

3. ລວມສູນປະຊາທິປະໄຕ ປຶກສາຫາລື ຕົກລົງເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ, ບຸກຄົນຂຶ້ນກັບການຈັດຕັ້ງ ແລະ ຂັ້ນລຸ່ມຂຶ້ນກັບຂັ້ນເທິງ;

4. ສ້າງ ແລະ ພັດທະນາ ຜູ້ພິພາກສາ ໃຫ້ມີຄຸນນະພາບ, ຖືກຕ້ອງ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;

5. ໂປ່ງໃສ, ຍຸຕິທຳ, ເປີດເຜີຍ, ພາວະວິໄສ ແລະ ສາມາດກວດສອບໄດ້;

6. ມີຄວາມສະເໝີພາບ ລະຫວ່າງຍິງ-ຊາຍ ແລະ ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງລາວທຸກເຜົ່າ.

### ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ຜູ້ພິພາກສາ, ຄະນະກຳມະການ, ບຸກຄົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຢູ່ ສປປ ລາວ.

ມາດຕາ 7 (ປັບປຸງ) ການຮ່ວມມືສາກົນ

ລັດ ສົ່ງເສີມ ການພົວພັນ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຜູ້ພິພາກສາ ດ້ວຍການ ຮ່ວມມືທາງດ້ານກົດໝາຍ ແລະ ຍຸຕິທຳ, ການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ ຫຼື ສຳມະນາ, ຍົກລະດັບຄວາມຮູ້, ຄວາມສາມາດດ້ານວິຊາການ ເພື່ອພັດທະນາວຽກງານຂອງຜູ້ພິພາກສາ ໃຫ້ມີຄຸນນະພາບ ແລະ ຮັບປະກັນຄວາມຍຸຕິທຳ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ຊັ້ນ, ມາດຕະຖານ ແລະ ການສອບເສັງ ຜູ້ພິພາກສາ
### ໝວດທີ 1
### ຊັ້ນຜູ້ພິພາກສາ

ມາດຕາ 8 (ປັບປຸງ) ຊັ້ນຜູ້ພິພາກສາ

ຜູ້ພິພາກສາ ຈັດເປັນ ສີ່ຊັ້ນ ດັ່ງນີ້:

1. ຜູ້ພິພາກສາ ຊັ້ນໜຶ່ງ;
2. ຜູ້ພິພາກສາ ຊັ້ນສອງ;
3. ຜູ້ພິພາກສາ ຊັ້ນສາມ;
4. ຜູ້ພິພາກສາ ຊັ້ນສີ່.

ຜູ້ພິພາກສາແຕ່ລະຊັ້ນ ສາມາດປະຈຳການຢູ່ສານປະຊາຊົນແຕ່ລະຂັ້ນ ຕາມຄວາມເໝາະສົມ.

ມາດຕາ 9 (ໃໝ່) ຜູ້ພິພາກສາ ຊັ້ນໜຶ່ງ

ຜູ້ພິພາກສາ ຊັ້ນໜຶ່ງ ແມ່ນ ຜູ້ພິພາກສາ ທີ່ໄດ້ຮັບການແຕ່ງຕັ້ງໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ ພາຍຫຼັງໄດ້ສອບເສັງຜ່ານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້.

ມາດຕາ 10 (ໃໝ່) ຜູ້ພິພາກສາ ຊັ້ນສອງ

ຜູ້ພິພາກສາ ຊັ້ນສອງ ແມ່ນ ຜູ້ພິພາກສາ ທີ່ໄດ້ຮັບການຕົກລົງເລື່ອນຊັ້ນ ຈາກຜູ້ພິພາກສາ ຊັ້ນໜຶ່ງ ໂດຍປະທານສານປະຊາຊົນສູງສຸດ ຕາມການເຫັນດີຂອງສະພາຜູ້ພິພາກສາ.

ມາດຕາ 11 (ໃໝ່) ຜູ້ພິພາກສາ ຊັ້ນສາມ

ຜູ້ພິພາກສາ ຊັ້ນສາມ ແມ່ນ ຜູ້ພິພາກສາ ທີ່ໄດ້ຮັບການຕົກລົງເລື່ອນຊັ້ນ ຈາກຜູ້ພິພາກສາ ຊັ້ນສອງ ໂດຍປະທານສານປະຊາຊົນສູງສຸດ ຕາມການເຫັນດີຂອງສະພາຜູ້ພິພາກສາ.

ມາດຕາ 12 (ປັບປຸງ) ຜູ້ພິພາກສາ ຊັ້ນສີ່

ຜູ້ພິພາກສາ ຊັ້ນສີ່ ແມ່ນ ຜູ້ພິພາກສາ ທີ່ໄດ້ຮັບການແຕ່ງຕັ້ງ ໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ ພາຍຫຼັງໄດ້ສອບເສັງຜ່ານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້.

# ໝວດທີ 2
## ມາດຕະຖານຂອງຜູ້ພິພາກສາ

**ມາດຕາ 13 (ປັບປຸງ) ມາດຕະຖານລວມຂອງຜູ້ພິພາກສາ**

ຜູ້ພິພາກສາ ມີມາດຕະຖານລວມ ດັ່ງນີ້:

1. ເປັນຄົນເຊື້ອຊາດລາວ ແລະ ສັນຊາດລາວ;
2. ມີອາຍຸ ແຕ່ ຊາວແປດປີ ຂຶ້ນໄປ;
3. ມີຄວາມຈົງຮັກພັກດີ, ທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ຮູ້ຈຳແນກ ມິດ-ສັດຕູຈະແຈ້ງ, ມີສະຕິຕໍ່ການຈັດຕັ້ງ, ມີລະບຽບວິໄນສູງ, ບໍ່ເຊື່ອຟັງການບິດເບືອນ, ພິກປີ້ນຄວາມຈິງ ຂອງຄູ່ຄວາມ ແລະ ບຸກຄົນອື່ນ;
4. ມີຄຸນສົມບັດ, ສັດຊື່ບໍລິສຸດ, ທ່ຽງທຳ, ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ ແລະ ກົດໝາຍ ຢ່າງເຂັ້ມງວດ; ສະກັດກັ້ນ ແລະ ຕ້ານປາກົດການສວຍໂອກາດ, ສໍ້ໂກງ, ຮັບ ຫຼື ໃຫ້ ສິນບົນ, ໃຊ້ອຳນາດເກີນຂອບເຂດ ໃນການປະຕິບັດໜ້າທີ່;
5. ມີທັດສະນະເບິ່ງບັນຫາ ເລິກເຊິ່ງ, ຮອບດ້ານ, ພາວະວິໄສ, ບໍ່ລຳອຽງ, ບໍ່ອະຄະຕິ ແລະ ຮູ້ວິໄຈ ໄຈ້ແຍກຂໍ້ມູນຫຼັກຖານ ຢ່າງຖືກຕ້ອງ, ຊັດເຈນ ແລະ ທັນສະພາບການ, ມີຄວາມສະຫຼຽວໄວ, ກ້າຄິດ, ກ້າເຮັດ, ກ້າຮັບຜິດຊອບ ແລະ ກ້າປ່ຽນແປງຈຸດອ່ອນຂອງຕົນ;
6. ມີລະດັບການສຶກສາກົດໝາຍ ແຕ່ຊັ້ນສູງ ຂຶ້ນໄປ ແລະ ໄດ້ຜ່ານຫຼັກສູດຝຶກອົບຮົມຜູ້ພິພາກສາ;
7. ມີລະດັບທິດສະດີການເມືອງ ແລະ ການປົກຄອງ;
8. ບໍ່ເຄີຍຖືກລົງໂທດທາງອາຍາ ຍ້ອນການກະທຳຜິດໂດຍເຈດຕະນາ;
9. ສາມາດນຳໃຊ້ຄອມພິວເຕີ;
10. ຮູ້ພາສາຕ່າງປະເທດໃດໜຶ່ງ;
11. ມີສຸຂະພາບດີ.

**ມາດຕາ 14 (ໃໝ່) ມາດຕະຖານສະເພາະ ຂອງຜູ້ພິພາກສາ ຊັ້ນໜຶ່ງ**

ຜູ້ພິພາກສາ ຊັ້ນໜຶ່ງ ນອກຈາກມີມາດຕະຖານລວມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍສະບັບນີ້ແລ້ວ ຍັງຕ້ອງໄດ້ສອບເສັງຜ່ານ ເປັນຜູ້ພິພາກສາ ຊັ້ນໜຶ່ງ.

**ມາດຕາ 15 (ໃໝ່) ມາດຕະຖານສະເພາະ ຂອງຜູ້ພິພາກສາ ຊັ້ນສອງ**

ຜູ້ພິພາກສາ ຊັ້ນສອງ ນອກຈາກມີມາດຕະຖານລວມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍສະບັບນີ້ແລ້ວ ຍັງຕ້ອງເປັນຜູ້ພິພາກສາ ຊັ້ນໜຶ່ງ ແຕ່ ສາມປີ ຂຶ້ນໄປ, ຍົກເວັ້ນ ຜູ້ທີ່ມີຜົນງານພົ້ນເດັ່ນ ຊຶ່ງໄດ້ຮັບການປະເມີນ ແລະ ຢັ້ງຢືນ ຂອງການຈັດຕັ້ງຕົນ ກໍສາມາດເລື່ອນກ່ອນກຳນົດເວລາ.

**ມາດຕາ 16 (ໃໝ່) ມາດຕະຖານສະເພາະ ຂອງຜູ້ພິພາກສາ ຊັ້ນສາມ**

ຜູ້ພິພາກສາ ຊັ້ນສາມ ນອກຈາກມີມາດຕະຖານລວມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍສະບັບນີ້ແລ້ວ ຍັງຕ້ອງມີມາດຕະຖານສະເພາະ ດັ່ງນີ້:

1. ເປັນຜູ້ພິພາກສາ ຊັ້ນສອງ ແຕ່ ຫ້າປີ ຂຶ້ນໄປ, ຍົກເວັ້ນ ຜູ້ມີຜົນງານພົ້ນເດັ່ນ ຊຶ່ງໄດ້ຮັບການປະເມີນ ແລະ ຢັ້ງຢືນ ຂອງການຈັດຕັ້ງຕົນ ກໍສາມາດເລື່ອນກ່ອນກຳນົດເວລາ;
2. ມີບົດຮຽນ ແລະ ປະສົບການສູງ ໃນການດຳເນີນຄະດີ;
3. ມີບົດບາດ, ໄດ້ຮັບຄວາມເຊື່ອຖື ໄວ້ວາງໃຈ ຈາກການຈັດຕັ້ງ ແລະ ສັງຄົມ ໃນການປະຕິບັດໜ້າທີ່.

**ມາດຕາ 17 (ປັບປຸງ) ມາດຕະຖານສະເພາະ ຂອງຜູ້ພິພາກສາ ຊັ້ນສີ່**

ຜູ້ພິພາກສາ ຊັ້ນສີ່ ນອກຈາກມີມາດຕະຖານລວມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍສະບັບນີ້ແລ້ວ ຍັງຕ້ອງມີມາດຕະຖານສະເພາະ ດັ່ງນີ້:

1. ມີຄວາມຊຳນານ ແລະ ປະສົບການສູງ ໃນການດຳເນີນຄະດີ;
2. ມີບົດບາດ, ໄດ້ຮັບຄວາມເຊື່ອຖືໄວ້ວາງໃຈ ຈາກການຈັດຕັ້ງ ແລະ ສັງຄົມ ໃນການປະຕິບັດໜ້າທີ່;
3. ໄດ້ສອບເສັງຜ່ານ ເປັນຜູ້ພິພາກສາ ຊັ້ນສີ່.

## ໝວດທີ 3
## ການສອບເສັງເປັນຜູ້ພິພາກສາ

**ມາດຕາ 18 (ປັບປຸງ) ການສອບເສັງເປັນຜູ້ພິພາກສາ**

ການສອບເສັງເປັນຜູ້ພິພາກສາ ມີ ດັ່ງນີ້:

1. ການສອບເສັງ ເປັນຜູ້ພິພາກສາ ຊັ້ນໜຶ່ງ;
2. ການສອບເສັງ ເປັນຜູ້ພິພາກສາ ຊັ້ນສີ່.

ລາຍລະອຽດຂອງການສອບເສັງເປັນ ຜູ້ພິພາກສາ ຊັ້ນໜຶ່ງ ແລະ ຊັ້ນສີ່ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 19 (ປັບປຸງ) ເງື່ອນໄຂຂອງຜູ້ສອບເສັງ ເປັນຜູ້ພິພາກສາ ຊັ້ນໜຶ່ງ**

ຜູ້ສອບເສັງເປັນຜູ້ພິພາກສາ ຊັ້ນໜຶ່ງ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ໄດ້ຮັບການແຕ່ງຕັ້ງ ເປັນຜູ້ຊ່ວຍຜູ້ພິພາກສາ ສາມປີ ຂຶ້ນໄປ;
2. ມີໃບຢັ້ງຢືນການປະເມີນຜົນການປະຕິບັດໜ້າທີ່ ໃນການເປັນຜູ້ຊ່ວຍຜູ້ພິພາກສາ ໃນລະດັບດີ;
3. ໄດ້ຮັບການສະເໜີ ແລະ ຢັ້ງຢືນຈາກຜູ້ພິພາກສາ ທີ່ຜູ້ຊ່ວຍຜູ້ພິພາກສາ ດັ່ງກ່າວຂຶ້ນກັບ;
4. ມີການສະເໜີ ຈາກປະທານສານປະຊາຊົນ ຫຼື ສານທະຫານ ທີ່ກ່ຽວຂ້ອງ ຕາມການເຫັນດີຂອງຄະນະປະທານ.

**ມາດຕາ 20 (ປັບປຸງ) ເງື່ອນໄຂຂອງຜູ້ສອບເສັງ ເປັນຜູ້ພິພາກສາ ຊັ້ນສີ່**

ຜູ້ສອບເສັງເປັນຜູ້ພິພາກສາ ຊັ້ນສີ່ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເຄີຍດຳລົງຕຳແໜ່ງ ປະທານ ຫຼື ຮອງປະທານ ສານປະຊາຊົນພາກ, ຮອງປະທານສານທະຫານຂັ້ນສູງ, ປະທານ ຫຼື ຮອງປະທານ ສານທະຫານພາກ, ແຂວງ, ນະຄອນຫຼວງ, ປະທານ ຫຼື ຮອງປະທານ ສານປະຊາຊົນແຂວງ, ນະຄອນຫຼວງ ແລະ ປະທານສານປະຊາຊົນເຂດ;
2. ເປັນຜູ້ພິພາກສາ ຊັ້ນສາມ ມາແລ້ວ ຫ້າປີ ຂຶ້ນໄປ;
3. ມີໃບຢັ້ງຢືນການປະເມີນຜົນການປະຕິບັດໜ້າທີ່ ໃນລະດັບດີ;
4. ໄດ້ຮັບການສະເໜີຈາກຄະນະປະທານສານປະຊາຊົນ ຫຼື ສານທະຫານ ທີ່ກ່ຽວຂ້ອງ;
5. ມີຂໍ້ຕົກລົງຈາກປະທານສານປະຊາຊົນສູງສຸດ ຕາມການເຫັນດີຂອງສະພາຜູ້ພິພາກສາ.

**ມາດຕາ 21 (ປັບປຸງ) ຄະນະກຳມະການສອບເສັງຜູ້ພິພາກສາ ຊັ້ນໜຶ່ງ**

ຄະນະກຳມະການສອບເສັງ ຜູ້ພິພາກສາຊັ້ນໜຶ່ງ ປະກອບດ້ວຍ:

| | |
|---|---|
| 1. ຮອງປະທານສານປະຊາຊົນສູງສຸດ | ເປັນປະທານ; |
| 2. ຫົວໜ້າກົມຈັດຕັ້ງ-ພະນັກງານ ສານປະຊາຊົນສູງສຸດ | ເປັນຮອງປະທານ; |
| 3. ຫົວໜ້າສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມ ສານປະຊາຊົນສູງສຸດ | ເປັນກຳມະການ; |
| 4. ຫົວໜ້າກົມຄຸ້ມຄອງວິຊາການ ແລະ ສະຖິຕິສານ ສານປະຊາຊົນສູງສຸດ | ເປັນກຳມະການ; |
| 5. ຫົວໜ້າກົມກວດກາ ສານປະຊາຊົນສູງສຸດ | ເປັນກຳມະການ; |
| 6. ສະມາຊິກສະພາຜູ້ພິພາກສາ ຈຳນວນໜຶ່ງ | ເປັນກຳມະການ. |

ຄະນະກຳມະການສອບເສັງຜູ້ພິພາກສາ ຊັ້ນໜຶ່ງ ມີກອງເລຂາຂອງຕົນ. ຄະນະກຳມະການ ແລະ ກອງເລຂາ ດັ່ງກ່າວ ໄດ້ຮັບການແຕ່ງຕັ້ງຈາກປະທານສານປະຊາຊົນສູງສຸດ.

**ມາດຕາ 22 (ປັບປຸງ) ຄະນະກຳມະການສອບເສັງຜູ້ພິພາກສາ ຊັ້ນສີ່**

ຄະນະກຳມະການສອບເສັງ ຜູ້ພິພາກສາ ຊັ້ນສີ່ ປະກອບດ້ວຍ:

| | |
|---|---|
| 1. ປະທານສານປະຊາຊົນສູງສຸດ | ເປັນປະທານ; |
| 2. ຮອງປະທານກຳມາທິການຍຸຕິທຳ ສະພາແຫ່ງຊາດ | ເປັນຮອງປະທານ; |
| 3. ຮອງລັດຖະມົນຕີ ກະຊວງຍຸຕິທຳ | ເປັນກຳມະການ; |
| 4. ຮອງລັດຖະມົນຕີ ກະຊວງພາຍໃນ | ເປັນກຳມະການ; |
| 5. ສະມາຊິກສະພາຜູ້ພິພາກສາ ຈຳນວນໜຶ່ງ | ເປັນກຳມະການ; |
| 6. ຫົວໜ້າກົມຈັດຕັ້ງ-ພະນັກງານ ສານປະຊາຊົນສູງສຸດ | ເປັນກຳມະການ. |

ຄະນະກຳມະການສອບເສັງ ຜູ້ພິພາກສາ ຊັ້ນສີ່ ມີກອງເລຂາຂອງຕົນ. ຄະນະກຳມະການ ແລະ ກອງເລຂາ ດັ່ງກ່າວ ໄດ້ຮັບການແຕ່ງຕັ້ງຈາກຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 23 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະກຳມະການສອບເສັງ ຜູ້ພິພາກສາ ຊັ້ນໜຶ່ງ ແລະ ຊັ້ນສີ່**

ຄະນະກຳມະການສອບເສັງ ຜູ້ພິພາກສາ ຊັ້ນໜຶ່ງ ແລະ ຊັ້ນສີ່ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຟັງການລາຍງານ ແລະ ສະເໜີບັນຊີລາຍຊື່ ຜູ້ສອບເສັງທີ່ມີເງື່ອນໄຂ;
2. ຄົ້ນຄວ້າ, ພິຈາລະນາ ແລະ ຄັດເລືອກຜູ້ສອບເສັງ;
3. ຄົ້ນຄວ້າເນື້ອໃນ ແລະ ອອກຫົວຂໍ້ສອບເສັງ;

4. ດຳເນີນການສອບເສັງ, ກວດບົດສອບເສັງ ແລະ ໃຫ້ຄະແນນ;

5. ລາຍງານ ແລະ ປະກາດຜົນການສອບເສັງ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງປະທານສານປະຊາຊົນສູງສຸດ ແລະ ຄະນະປະຈຳສະພາແຫ່ງຊາດ.

## ພາກທີ III
## ການແຕ່ງຕັ້ງ, ສິດ ແລະ ໜ້າທີ່, ການຍົກຍ້າຍ, ການສັບປ່ຽນບ່ອນປະຈຳການ, ການປົດຕຳແໜ່ງ, ການຫຼຸດຊັ້ນ ແລະ ການເລື່ອນຊັ້ນ ຂອງຜູ້ພິພາກສາ

### ໝວດທີ 1
### ການແຕ່ງຕັ້ງ, ສິດ ແລະ ໜ້າທີ່ ຂອງຜູ້ພິພາກສາ

**ມາດຕາ 24 (ປັບປຸງ) ການແຕ່ງຕັ້ງ ຜູ້ພິພາກສາ**

ຜູ້ພິພາກສາ ຖືກແຕ່ງຕັ້ງ ໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ.

ຂັ້ນຕອນ, ການປະກອບເອກະສານ ການສະເໜີແຕ່ງຕັ້ງຜູ້ພິພາກສາ, ພິທີການປະກາດ ແລະ ການມອບມະຕິແຕ່ງຕັ້ງຜູ້ພິພາກສາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 25 (ປັບປຸງ) ສິດ ແລະ ໜ້າທີ່ລວມ ຂອງຜູ້ພິພາກສາ**

ຜູ້ພິພາກສາ ມີ ສິດ ແລະ ໜ້າທີ່ລວມ ດັ່ງນີ້:

1. ກຳນົດແຜນການຄົ້ນຄວ້າຄະດີ ທີ່ຕົນຮັບຜິດຊອບ;

2. ເກັບກຳຂໍ້ມູນຫຼັກຖານກ່ຽວກັບຄະດີ;

3. ຄົ້ນຄວ້າສຳນວນຄະດີທີ່ໄດ້ຮັບມອບໝາຍ;

4. ຕົກລົງໃຫ້ຈ່າສານອອກໝາຍຮຽກຄູ່ຄວາມ ຫຼື ຜູ້ເຂົ້າຮ່ວມອື່ນ ເຂົ້າມາໃຫ້ການ ແລະ ຊີ້ແຈງກ່ຽວກັບຄະດີ;

5. ເອົາຄຳໃຫ້ການຂອງຄູ່ຄວາມ ແລະ ບຸກຄົນອື່ນທີ່ເຂົ້າຮ່ວມໃນການດຳເນີນຄະດີ;

6. ໄກ່ເກ່ຍ ຫຼື ທຳການຊ້ອງໜ້າຄູ່ຄວາມໃນຄະດີ;

7. ຕົກລົງເລື່ອນ ຫຼື ໂຈະການດຳເນີນຄະດີ;

8. ອອກຄຳສັ່ງ, ຄຳຊີ້ຂາດ ຫຼື ນຳໃຊ້ມາດຕະການໃດໜຶ່ງ;

9. ນັ່ງເປັນປະທານ ຫຼື ປະກອບເປັນ ຄະນະສານຕັດສິນຄະດີ;

10. ຂຽນຄຳຕັດສິນ, ຄຳພິພາກສາ ຄະດີທີ່ຕົນຮັບຜິດຊອບ;

11. ລົງລາຍເຊັນໃນ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ ແລະ ນິຕິກຳອື່ນ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

12. ໄດ້ຮັບການບຳລຸງ, ຍົກລະດັບ ກ່ຽວກັບວຽກງານຂອງຜູ້ພິພາກສາ;

13. ໄດ້ຮັບການປົກປ້ອງຕາມກົດໝາຍຈາກການ ນາບຂູ່, ທຳຮ້າຍຮ່າງກາຍ, ສຸຂະພາບ, ຊີວິດ ແລະ ກຽດສັກສີ ເນື່ອງຈາກການປະຕິບັດໜ້າທີ່ຂອງຕົນ;

14. ໄດ້ຮັບການແຕ່ງຕັ້ງ ໃຫ້ດຳລົງຕຳແໜ່ງບໍລິຫານໃດໜຶ່ງ ຂອງສານປະຊາຊົນແຕ່ລະຂັ້ນ;

15. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ;

16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 26 (ໃໝ່) ສິດ ແລະ ໜ້າທີ່ສະເພາະ ຂອງຜູ້ພິພາກສາ ຊັ້ນໜຶ່ງ**

ຜູ້ພິພາກສາ ຊັ້ນໜຶ່ງ ນັ່ງເປັນປະທານ ຫຼື ປະກອບ ເປັນຄະນະສານຕັດສິນ ຢູ່ສານປະຊາຊົນເຂດ ແລະ ສານທະຫານ ແຂວງ, ນະຄອນຫຼວງ, ເປັນຄະນະສານຕັດສິນຂັ້ນຕົ້ນ ຢູ່ສານປະຊາຊົນ ແຂວງ, ນະຄອນຫຼວງ ແລະ ສານທະຫານພາກ.

**ມາດຕາ 27 (ໃໝ່) ສິດ ແລະ ໜ້າທີ່ສະເພາະ ຂອງຜູ້ພິພາກສາ ຊັ້ນສອງ**

ຜູ້ພິພາກສາ ຊັ້ນສອງ ນັ່ງເປັນປະທານ ຫຼື ປະກອບ ເປັນຄະນະສານຕັດສິນ ເປັນຂັ້ນຕົ້ນ ແລະ ຂັ້ນອຸທອນ ຢູ່ສານປະຊາຊົນ ແຂວງ, ນະຄອນຫຼວງ ແລະ ສານທະຫານພາກ, ນັ່ງເປັນປະທານ ຫຼື ປະກອບເປັນຄະນະສານຕັດສິນເປັນຂັ້ນຕົ້ນ ຢູ່ສານປະຊາຊົນເຂດ ແລະ ສານທະຫານ ແຂວງ, ນະຄອນຫຼວງ ປະກອບເປັນຄະນະສານຕັດສິນຂັ້ນອຸທອນ ຢູ່ສານປະຊາຊົນພາກ ແລະ ສານທະຫານຂັ້ນສູງ.

**ມາດຕາ 28 (ໃໝ່) ສິດ ແລະ ໜ້າທີ່ສະເພາະ ຂອງຜູ້ພິພາກສາ ຊັ້ນສາມ**

ຜູ້ພິພາກສາ ຊັ້ນສາມ ນັ່ງເປັນປະທານ ຫຼື ປະກອບ ເປັນຄະນະສານຕັດສິນ ເປັນຂັ້ນອຸທອນ ແລະ ຂັ້ນລົບລ້າງ ຢູ່ສານປະຊາຊົນພາກ ແລະ ສານທະຫານຂັ້ນສູງ, ນັ່ງເປັນປະທານ ຫຼື ປະກອບ ເປັນຄະນະສານຕັດສິນ ເປັນຂັ້ນອຸທອນ ຫຼື ເປັນຂັ້ນຕົ້ນ ຢູ່ສານປະຊາຊົນ ແຂວງ, ນະຄອນຫຼວງ ຫຼື ສານປະຊາຊົນເຂດ ແລະ ສານທະຫານ ພາກ ແລະ ແຂວງ, ນະຄອນຫຼວງ.

**ມາດຕາ 29 (ໃໝ່) ສິດ ແລະ ໜ້າທີ່ສະເພາະ ຂອງຜູ້ພິພາກສາ ຊັ້ນສີ່**

ຜູ້ພິພາກສາ ຊັ້ນສີ່ ນັ່ງເປັນປະທານ ຫຼື ປະກອບ ເປັນຄະນະສານຕັດສິນ ເປັນຂັ້ນລົບລ້າງ ຢູ່ສານປະຊາຊົນສູງສຸດ, ສານປະຊາຊົນພາກ ແລະ ສານທະຫານຂັ້ນສູງ, ນັ່ງເປັນປະທານ ຄະນະສານຕັດສິນ ຂັ້ນອຸທອນ ຫຼື ຂັ້ນຕົ້ນ ຢູ່ສານປະຊາຊົນ ພາກ, ແຂວງ, ນະຄອນຫຼວງ, ຢູ່ສານປະຊາຊົນເຂດ, ສານທະຫານ ພາກ ແລະ ແຂວງ, ນະຄອນຫຼວງ.

## ໝວດທີ 2
## ການຍົກຍ້າຍ, ການສັບປ່ຽນບ່ອນປະຈຳການ ແລະ ການປົດຕຳແໜ່ງ ຜູ້ພິພາກສາ

**ມາດຕາ 30 ການຍົກຍ້າຍຜູ້ພິພາກສາ**

ຜູ້ພິພາກສາ ຖືກຍົກຍ້າຍໄປຮັບໜ້າທີ່ໃໝ່ໃນຂະແໜງການ ຫຼື ຂົງເຂດອື່ນ ໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີ ຂອງປະທານສານປະຊາຊົນສູງສຸດ.

ໃນກໍລະນີຖືກຍົກຍ້າຍກັບຄືນນັ້ນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 48 ຂອງກົດໝາຍສະບັບນີ້.

**ມາດຕາ 31 (ປັບປຸງ) ການສັບປ່ຽນບ່ອນປະຈຳການຂອງຜູ້ພິພາກສາ**

ຜູ້ພິພາກສາ ຖືກສັບປ່ຽນບ່ອນປະຈຳການ ພາຍໃນສານປະຊາຊົນ ໂດຍປະທານສານປະຊາຊົນສູງສຸດ.

ສຳລັບຜູ້ພິພາກສາສານທະຫານ ຖືກສັບປ່ຽນບ່ອນປະຈຳການພາຍໃນສານທະຫານ ໂດຍລັດຖະມົນຕີກະຊວງປ້ອງກັນປະເທດ.

**ມາດຕາ 32 (ປັບປຸງ) ການປົດຕຳແໜ່ງຜູ້ພິພາກສາ**

ຜູ້ພິພາກສາ ຖືກປົດຕຳແໜ່ງ ໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງ ປະທານສານປະຊາຊົນສູງສຸດ.

ສຳລັບຂັ້ນຕອນ ການປົດຕຳແໜ່ງຜູ້ພິພາກສາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 3
## ການທຽບຊັ້ນ ແລະ ການເລື່ອນຊັ້ນ ຜູ້ພິພາກສາ

**ມາດຕາ 33 (ໃໝ່) ການທຽບຊັ້ນຜູ້ພິພາກສາ ຕາມຕຳແໜ່ງບໍລິຫານ**

ຊັ້ນຜູ້ພິພາກສາ ໃຫ້ທຽບຕາມຕຳແໜ່ງບໍລິຫານ ດັ່ງນີ້:

1. ຜູ້ພິພາກສາ ຊັ້ນໜຶ່ງ ທຽບເທົ່າພະນັກງານ ຕຳແໜ່ງບໍລິຫານ ປະເພດ 5;
2. ຜູ້ພິພາກສາ ຊັ້ນສອງ ທຽບເທົ່າພະນັກງານ ຕຳແໜ່ງບໍລິຫານ ປະເພດ 4;
3. ຜູ້ພິພາກສາ ຊັ້ນສາມ ທຽບເທົ່າພະນັກງານ ຕຳແໜ່ງບໍລິຫານ ປະເພດ 3;
4. ຜູ້ພິພາກສາ ຊັ້ນສີ່ ທຽບເທົ່າພະນັກງານ ຕຳແໜ່ງບໍລິຫານ ປະເພດ 2.

**ມາດຕາ 34 (ໃໝ່) ການທຽບຊັ້ນຜູ້ພິພາກສາ**

ການທຽບຊັ້ນຜູ້ພິພາກສາ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ຖືກແຕ່ງຕັ້ງເປັນ ປະທານ, ຮອງປະທານ ສານປະຊາຊົນພາກ; ປະທານ, ຮອງປະທານ ສານປະຊາຊົນແຂວງ, ນະຄອນຫຼວງ, ປະທານສານປະຊາຊົນເຂດ; ຮອງປະທານສານທະຫານຂັ້ນສູງ; ປະທານ, ຮອງປະທານສານທະຫານ ພາກ, ແຂວງ, ນະຄອນຫຼວງ ໃຫ້ທຽບ ເປັນຜູ້ພິພາກສາ ຊັ້ນສາມ ນັບແຕ່ວັນແຕ່ງຕັ້ງ ເປັນຕົ້ນໄປ;
2. ຮອງປະທານສານປະຊາຊົນເຂດ ໃຫ້ທຽບ ເປັນຜູ້ພິພາກສາຊັ້ນສອງ ນັບແຕ່ວັນແຕ່ງຕັ້ງ ເປັນຕົ້ນໄປ;
3. ຜູ້ຖືກແຕ່ງຕັ້ງເປັນ ຫົວໜ້າ ຫຼື ຮອງຫົວໜ້າກົມ ທີ່ເຄີຍເປັນຜູ້ພິພາກສາມາກ່ອນ ໃຫ້ທຽບເປັນຜູ້ພິພາກສາ ຊັ້ນສາມ ນັບແຕ່ວັນແຕ່ງຕັ້ງ ເປັນຕົ້ນໄປ;
4. ຜູ້ຖືກແຕ່ງຕັ້ງເປັນ ຫົວໜ້າພະແນກ ທີ່ເຄີຍເປັນຜູ້ພິພາກສາມາກ່ອນ ໃຫ້ທຽບເປັນຜູ້ພິພາກສາ ຊັ້ນສອງ ນັບແຕ່ວັນແຕ່ງຕັ້ງ ເປັນຕົ້ນໄປ.

**ມາດຕາ 35 (ປັບປຸງ) ການເລື່ອນຊັ້ນຜູ້ພິພາກສາ**

ຜູ້ພິພາກສາ ຊັ້ນໜຶ່ງ ຖືກເລື່ອນເປັນຜູ້ພິພາກສາ ຊັ້ນສອງ ແລະ ຜູ້ພິພາກສາ ຊັ້ນສອງ ຖືກເລື່ອນເປັນຜູ້ພິພາກສາ ຊັ້ນສາມ ໂດຍປະທານສານປະຊາຊົນສູງສຸດ ຕາມການເຫັນດີຂອງສະພາຜູ້ພິພາກສາ.

ຂັ້ນຕອນ ແລະ ການປະກອບເອກະສານ ສະເໜີເລື່ອນຊັ້ນຜູ້ພິພາກສາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

# ພາກທີ IV

# ຈັນຍາບັນ, ຈັນຍາທຳ ແລະ ການຝຶກອົບຮົມ

## ໝວດທີ 1

## ຈັນຍາບັນ ແລະ ຈັນຍາທຳ

**ມາດຕາ 36 ຈັນຍາບັນ ຂອງຜູ້ພິພາກສາ**

ຈັນຍາບັນຂອງຜູ້ພິພາກສາ ປະກອບດ້ວຍ:

1. ຈັນຍາບັນ ຕໍ່ຕົນເອງ;
2. ຈັນຍາບັນ ຕໍ່ວິຊາຊີບ;
3. ຈັນຍາບັນ ຕໍ່ການຈັດຕັ້ງ;
4. ຈັນຍາບັນ ຕໍ່ປະຊາຊົນ ແລະ ສັງຄົມ.

ແຕ່ລະຈັນຍາບັນ ຂອງຜູ້ພິພາກສາ ໃຫ້ປະຕິບັດຕາມຈັນຍາບັນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

**ມາດຕາ 37 ຈັນຍາທຳ ຂອງຜູ້ພິພາກສາ**

ຜູ້ພິພາກສາ ຕ້ອງໃຫ້ຄວາມຍຸຕິທຳແກ່ຄູ່ຄວາມ, ປະຕິບັດໜ້າທີ່ດ້ວຍຄວາມສັດຊື່ບໍລິສຸດ, ທ່ຽງທຳ, ຖືກຕ້ອງຕາມກົດໝາຍ, ຕາມເຫດການຕົວຈິງຂອງຄະດີ ແລະ ປະຕິບັດໜ້າທີ່ວຽກງານຢ່າງເຂັ້ມງວດ, ຮອບຄອບ, ຄົບຖ້ວນ, ພາວະວິໄສ ຕາມກົດໝາຍ, ຍຶດໝັ້ນໃນກຽດສັກສີຂອງສະຖາບັນຕຸລາການ, ຫຼີກເວັ້ນອະຄະຕິ ສີ່ປະການ ຄື ການລຳອຽງ ເພາະຄວາມຮັກ ຄວາມໂກດ, ຄວາມໂລບ, ຄວາມຫຼົງ ແລະ ຄວາມຢ້ານກົວ. ພ້ອມດຽວກັນນີ້ ຜູ້ພິພາກສາ ຍັງຕ້ອງມີການປະພຶດທີ່ດີ ແລະ ມີຄວາມອົດທົນສູງ.

**ມາດຕາ 38 ຄວາມຮັບຜິດຊອບຂອງຜູ້ພິພາກສາ ໃນການດຳເນີນ ແລະ ພິຈາລະນາຕັດສີນຄະດີ**

ໃນການດຳເນີນ ແລະ ພິຈາລະນາຕັດສີນຄະດີນັ້ນ ຜູ້ພິພາກສາ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຮັບປະກັນການພິຈາລະນາຕັດສີນຄະດີ ທີ່ຕົນຮັບຜິດຊອບນັ້ນ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ເຫດການຕົວຈິງ;
2. ນຳໃຊ້ມາດຕະການທາງກົດໝາຍ ເພື່ອຮັບປະກັນສິດ ແລະ ຜົນປະໂຫຍດຂອງລັດ, ຂອງສັງຄົມ ຫຼື ຂອງຄູ່ຄວາມ;
3. ຮັບຜິດຊອບຕໍ່ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ ທີ່ບໍ່ຖືກຕ້ອງຕາມກົດໝາຍ ໂດຍເຈດຕະນາ;
4. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການຝຶກອົບຮົມ

**ມາດຕາ 39 (ປັບປຸງ) ການຝຶກອົບຮົມຜູ້ພິພາກສາ**

ການຝຶກອົບຮົມຜູ້ພິພາກສາ ມີ ສາມປະເພດ ດັ່ງນີ້:

1. ການຝຶກອົບຮົມຂັ້ນພື້ນຖານ;
2. ການຝຶກອົບຮົມປົກກະຕິ;
3. ການຝຶກອົບຮົມສະເພາະ.

ການຝຶກອົບຮົມ ດຳເນີນດ້ວຍ ຮູບແບບກັບທີ່ ແລະ/ຫຼື ຮູບແບບທາງໄກດ້ວຍລະບົບເອເລັກໂຕຣນິກ.

**ມາດຕາ 40 (ປັບປຸງ) ການຝຶກອົບຮົມຂັ້ນພື້ນຖານ**

ການຝຶກອົບຮົມຂັ້ນພື້ນຖານ ແມ່ນ ການຝຶກອົບຮົມໃຫ້ຜູ້ພິພາກສາຊຸດໜຶ່ງ ທີ່ໄດ້ຮັບການແຕ່ງຕັ້ງໃໝ່ ໃຫ້ຮັບຮູ້ ແລະ ເຂົ້າໃຈ ດ້ານຄຸນທາດການເມືອງ, ສິນທຳປະຕິວັດ, ຈັນຍາບັນ ຈັນຍາທຳ ຂອງຜູ້ພິພາກສາ ແລະ ວຽກງານທີ່ຕົນຈະໄດ້ປະຕິບັດ ໂດຍສະເພາະ ຂັ້ນຕອນການຄົ້ນຄວ້າສຳນວນຄະດີ, ການປະກອບຫຼັກຖານ, ການຊັ່ງຊາຕີລາຄາຫຼັກຖານ, ການກະກຽມຂຶ້ນບັນລັງຕັດສິນຄະດີ, ຂັ້ນຕອນການໄຕ່ສວນ ແລະ ການຄວບຄຸມການດຳເນີນຄະດີໃນທີ່ປະຊຸມສານ, ການລົງຄຳເຫັນໃນຫ້ອງປະຊຸມລັບ, ການຂຽນຄຳຕັດສິນ ແລະ ການປະກາດຄຳຕັດສິນໃນທີ່ປະຊຸມສານ.

**ມາດຕາ 41 (ປັບປຸງ) ການຝຶກອົບຮົມປົກກະຕິ**

ການຝຶກອົບຮົມປົກກະຕິ ແມ່ນ ການຝຶກອົບຮົມໃຫ້ຜູ້ພິພາກສາ ໄດ້ຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບກົດໝາຍ, ນິຕິກຳໃຕ້ກົດໝາຍ ທີ່ສ້າງໃໝ່ ຫຼື ປັບປຸງ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

ການຝຶກອົບຮົມປົກກະຕິ ດຳເນີນຕາມແຜນການ ແລະ ຫຼັກສູດ ທີ່ໄດ້ກຳນົດໄວ້ ຊຶ່ງຈັດຂຶ້ນຢູ່ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມ ຂອງສານປະຊາຊົນສູງສຸດ ຫຼື ຢູ່ສານປະຊາຊົນທ້ອງຖິ່ນ.

**ມາດຕາ 42 (ປັບປຸງ) ການຝຶກອົບຮົມສະເພາະ**

ການຝຶກອົບຮົມສະເພາະ ແມ່ນ ການຝຶກອົບຮົມໃຫ້ຜູ້ພິພາກສາ ກ່ຽວກັບຫົວຂໍ້ໃດໜຶ່ງທີ່ຈຳເປັນ ຫຼື ບັນຫາ ທີ່ພົ້ນເດັ່ນ ຊຶ່ງເກີດຂຶ້ນຫຼາຍໃນສັງຄົມ ເພື່ອຍົກສູງຄຸນນະພາບສະເພາະດ້ານຂອງຜູ້ພິພາກສາ.

## ພາກທີ V
## ເງິນເດືອນ, ເງິນອຸດໜູນ

**ມາດຕາ 43 (ປັບປຸງ) ເງິນເດືອນ ແລະ ເງິນອຸດໜູນ**

ເງິນເດືອນ ແລະ ເງິນອຸດໜູນ ຂອງຜູ້ພິພາກສາ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

ສຳລັບ ເງິນເດືອນ ແລະ ເງິນອຸດໜູນ ຂອງຜູ້ພິພາກສາ ສານທະຫານ ໃຫ້ປະຕິບັດຕາມລະບຽບການຂອງກະຊວງປ້ອງກັນປະເທດ.

**ມາດຕາ 44 (ປັບປຸງ) ເງິນອຸດໜູນວິຊາຊີບ ຂອງຜູ້ພິພາກສາ**

ຜູ້ພິພາກສາ ຂອງສານປະຊາຊົນ ໄດ້ຮັບເງິນອຸດໜູນວິຊາຊີບ ໃນການເຄື່ອນໄຫວດຳເນີນຄະດີ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VI
## ການຮັບອຸດໜູນບຳນານ ແລະ ການສິ້ນສຸດ ການເປັນຜູ້ພິພາກສາ

**ມາດຕາ 45 (ປັບປຸງ) ການຮັບອຸດໜູນບຳນານ**

ການຮັບອຸດໜູນບຳນານຂອງຜູ້ພິພາກສາ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

ສຳລັບ ຜູ້ພິພາກສາ ຊັ້ນສາມ ແລະ ຊັ້ນສີ່ ທີ່ມີອາຍຸຮອດກະສຽນບຳນານແລ້ວ ສາມາດສືບຕໍ່ ເປັນຜູ້ພິພາກສາອາວຸໂສ ແຕ່ບໍ່ມີຕຳແໜ່ງບໍລິຫານ ແລະ ອາຍຸບໍ່ໃຫ້ເກີນ ຫົກສິບຫ້າປີ ແລະ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຄວາມຕ້ອງການ ຂອງການຈັດຕັ້ງ;
2. ມີຄວາມສະໝັກໃຈ ຢ່າງເປັນລາຍລັກອັກສອນ;
3. ມີສຸຂະພາບດີ.

ສຳລັບ ສິດ ແລະ ໜ້າທີ່ ຂອງຜູ້ພິພາກສາອາວຸໂສ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 46 (ປັບປຸງ) ການສິ້ນສຸດການເປັນຜູ້ພິພາກສາ**

ການເປັນຜູ້ພິພາກສາ ຈະສິ້ນສຸດລົງ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ການລາອອກ;
2. ການເສຍສັນຊາດລາວ;
3. ການປະລະໜ້າທີ່;
4. ການຖືກປົດຕຳແໜ່ງ ຫຼື ການຖືກໄລ່ອອກ;
5. ການຍົກຍ້າຍໄປຮັບໜ້າທີ່ໃໝ່ ໃນຂະແໜງການ ຫຼື ຂົງເຂດອື່ນ;
6. ການເສຍກຳລັງແຮງງານ;
7. ການຮັບອຸດໜູນບຳບານ;
8. ການເສຍຊີວິດ.

## ພາກທີ VII
## ການຄຸ້ມຄອງ ແລະ ການປົກປ້ອງຜູ້ພິພາກສາ
### ໝວດທີ 1
### ການຄຸ້ມຄອງຜູ້ພິພາກສາ

**ມາດຕາ 47 (ປັບປຸງ) ການຄຸ້ມຄອງຜູ້ພິພາກສາ**

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຄຸ້ມຄອງຜູ້ພິພາກສາທົ່ວປະເທດ ໂດຍໃຫ້:

1. ສານປະຊາຊົນສູງສຸດ ຄຸ້ມຄອງຜູ້ພິພາກສາ ແຕ່ລະຊັ້ນ ຂອງສານປະຊາຊົນທຸກຂັ້ນ;
2. ສານປະຊາຊົນພາກ ຄຸ້ມຄອງຜູ້ພິພາກສາຂອງຕົນ ແລະ ຜູ້ພິພາກສາຂອງສານປະຊາຊົນ ແຂວງ, ນະຄອນຫຼວງ ທີ່ຂຶ້ນກັບຕົນ;

3. ສານປະຊາຊົນ ແຂວງ, ນະຄອນຫຼວງ ຄຸ້ມຄອງຜູ້ພິພາກສາຂອງຕົນ ແລະ ຜູ້ພິພາກສາຂອງສານປະຊາຊົນເຂດ ທີ່ຂຶ້ນກັບຕົນ;

4. ສານປະຊາຊົນສູງສຸດ ແລະ ກະຊວງປ້ອງກັນປະເທດ ຄຸ້ມຄອງຜູ້ພິພາກສາຂອງສານທະຫານ.

ການຄຸ້ມຄອງຜູ້ພິພາກສາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 48 (ປັບປຸງ) ການຮັບຕຳແໜ່ງ ຂອງຜູ້ພິພາກສາຄືນໃໝ່**

ຜູ້ພິພາກສາທີ່ໄດ້ຖືກຍົກຍ້າຍໄປປະຈຳການຢູ່ຂະແໜງການ ຫຼື ຂົງເຂດອື່ນ ເມື່ອກັບຄືນມາປະຈຳການຢູ່ສານປະຊາຊົນນັ້ນ ຈະໄດ້ຮັບຮອງການເປັນຜູ້ພິພາກສາຄືນໃໝ່ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ບົນພື້ນຖານການສະເໜີຂອງປະທານສານປະຊາຊົນສູງສຸດ ດ້ວຍການເຫັນດີຂອງສະພາຜູ້ພິພາກສາ ໂດຍບໍ່ຈຳເປັນຕ້ອງຜ່ານການສອບເສັງອີກ.

ການຮັບຕຳແໜ່ງຂອງຜູ້ພິພາກສາຄືນໃໝ່ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ສຳລັບ ເງິນເດືອນ, ເງິນອຸດໜູນ ແລະ ເງິນອຸດໜູນວິຊາຊີບ ຂອງຜູ້ກ່ຽວ ໃຫ້ປະຕິບັດຕາມມາດຕາ 43 ແລະ 44 ຂອງກົດໝາຍສະບັບນີ້.

## ໝວດທີ 2
## ການປົກປ້ອງຜູ້ພິພາກສາ

**ມາດຕາ 49 (ປັບປຸງ) ການປົກປ້ອງຜູ້ພິພາກສາ**

ຜູ້ພິພາກສາຂອງສານປະຊາຊົນ ໄດ້ຮັບການປົກປ້ອງຕາມກົດໝາຍ ຈາກການແກ້ແຄ້ນ, ນາບຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະລະພາບ, ກຽດສັກສີ, ຊື່ສຽງ, ຊັບສິນສ່ວນຕົວ ຫຼື ຂອງຄອບຄົວ, ການໃສ່ຮ້າຍຜູ້ພິພາກສາ ໂດຍບໍ່ມີເຫດຜົນພຽງພໍ ຫຼື ບໍ່ມີມູນຄວາມຈິງ.

ຜູ້ພິພາກສາ ຈະບໍ່ຖືກດຳເນີນຄະດີອາຍາ ຫຼື ຈັບຕົວ, ກັກຕົວ, ກັກຂັງ ຖ້າຫາກບໍ່ໄດ້ຮັບການເຫັນດີຈາກຄະນະປະຈຳສະພາແຫ່ງຊາດ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕາມແຕ່ລະກໍລະນີ.

ໃນກໍລະນີ ຈັບຕົວ, ກັກຕົວ, ກັກຂັງ ຜູ້ພິພາກສາ ທີ່ກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນນັ້ນ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຕ້ອງລາຍງານປະທານສານປະຊາຊົນທີ່ກ່ຽວຂ້ອງ ເພື່ອລາຍງານຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາແຫ່ງຊາດ ໃນທັນທີ ເພື່ອຂໍຄຳເຫັນກ່ຽວກັບການດຳເນີນຄະດີ ໃນຂັ້ນຕໍ່ໄປ; ສຳລັບການຈັບຕົວ, ກັກຕົວ, ກັກຂັງ ຜູ້ພິພາກສາ ທີ່ປະຈຳການຢູ່ສານປະຊາຊົນສູງສຸດ ຕ້ອງລາຍງານປະທານສານປະຊາຊົນສູງສຸດ ແລະ ຄະນະປະຈຳສະພາແຫ່ງຊາດ.

ສຳລັບ ການຈັບຕົວ, ກັກຕົວ, ກັກຂັງ ຜູ້ພິພາກສາຂອງສານທະຫານນັ້ນ ເຈົ້າໜ້າທີ່ ຕ້ອງລາຍງານປະທານສານທະຫານທີ່ກ່ຽວຂ້ອງ ແລະ ປະທານສານທະຫານຂັ້ນສູງ ລາຍງານ ຕໍ່ ລັດຖະມົນຕີກະຊວງປ້ອງກັນປະເທດ, ປະທານສານປະຊາຊົນສູງສຸດ ແລະ ຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 50 (ປັບປຸງ) ການດຳເນີນຄະດີ ໃສ່ຜູ້ພິພາກສາ**

ນອກຈາກປະຕິບັດຕາມມາດຕາ 49 ຂອງກົດໝາຍສະບັບນີ້ແລ້ວ ໃນການດຳເນີນຄະດີໃສ່ ຜູ້ພິພາກສານັ້ນ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຍັງຕ້ອງປະຕິບັດຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ໃນກໍລະນີ ຜູ້ພິພາກສາ ທີ່ຖືກກ່າວຫາ ຕໍ່ການປະຕິບັດໜ້າທີ່ ທີ່ຕົນຮັບຜິດຊອບນັ້ນ ຈະຖືກໂຈະຊົ່ວຄາວຕາມຂໍ້ຕົກລົງຂອງປະທານສານປະຊາຊົນທີ່ກ່ຽວຂ້ອງ. ຂໍ້ຕົກລົງ ໃຫ້ໂຈະການປະຕິບັດໜ້າທີ່ຂອງຜູ້ກ່ຽວນັ້ນ ມີຜົນບັງຄັບປະຕິບັດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ມາດຕາ 51 ການຟື້ນຟູຄືນ ການປະຕິບັດໜ້າທີ່ ຂອງຜູ້ພິພາກສາ**

ການປະຕິບັດໜ້າທີ່ ຂອງຜູ້ພິພາກສາ ທີ່ຖືກໂຈະຊົ່ວຄາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 50 ຂອງກົດໝາຍສະບັບນີ້ ຈະໄດ້ຮັບການຟື້ນຟູຄືນ ເມື່ອສານທາກໄດ້ຕັດສິນໃຫ້ຜູ້ກ່ຽວພົ້ນຂໍ້ກ່າວຫາ.

## ພາກທີ VIII
## ການຕິດຕາມ, ກວດກາ ແລະ ການປະເມີນ ຜູ້ພິພາກສາ
### ໝວດທີ 1
### ການຕິດຕາມ, ກວດກາ ຜູ້ພິພາກສາ

**ມາດຕາ 52 ການຕິດຕາມ, ກວດກາ ຜູ້ພິພາກສາ**

ການຕິດຕາມ, ກວດກາ ຜູ້ພິພາກສາ ແມ່ນ ການຕິດຕາມ, ກວດກາ ການເຄື່ອນໄຫວປະຕິບັດໜ້າທີ່ທາງດ້ານວິຊາການ ແລະ ການປະພຶດ ຂອງຜູ້ພິພາກສາ ໂດຍຄະນະກຳມະການຕິດຕາມ, ກວດກາ ຂອງສານປະຊາຊົນສູງສຸດ, ສານປະຊາຊົນທ້ອງຖິ່ນ, ຄະນະປະຈຳສະພາແຫ່ງຊາດ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ.

**ມາດຕາ 53 (ປັບປຸງ) ຄະນະກຳມະການຕິດຕາມ, ກວດກາ ຜູ້ພິພາກສາ**

ຄະນະກຳມະການຕິດຕາມ, ກວດກາ ຜູ້ພິພາກສາ ຖືກແຕ່ງຕັ້ງໂດຍປະທານສານປະຊາຊົນສູງສຸດ ຊຶ່ງປະກອບດ້ວຍ ຄະນະກຳມະການຕິດຕາມ, ກວດກາ ຂອງສານປະຊາຊົນສູງສຸດ ແລະ ສານປະຊາຊົນທ້ອງຖິ່ນ.

**ກ. ຄະນະກຳມະການຕິດຕາມ, ກວດກາ ຂອງສານປະຊາຊົນສູງສຸດ ປະກອບດ້ວຍ:**

| | |
|---|---|
| 1. ຮອງປະທານສານປະຊາຊົນສູງສຸດ | ເປັນປະທານ; |
| 2. ຫົວໜ້າກົມກວດກາ | ເປັນຮອງປະທານ; |
| 3. ຫົວໜ້າກົມຄຸ້ມຄອງວິຊາການ ແລະ ສະຖິຕິສານ | ເປັນກຳມະການ; |
| 4. ຫົວໜ້າກົມຈັດຕັ້ງ-ພະນັກງານ | ເປັນກຳມະການ; |
| 5. ຜູ້ຕາງໜ້າ ສະພາຜູ້ພິພາກສາ ຈຳນວນໜຶ່ງ | ເປັນກຳມະການ; |
| 6. ຜູ້ຕາງໜ້າ ອົງການຈັດຕັ້ງມະຫາຊົນ | ເປັນກຳມະການ. |

**ຂ. ຄະນະກຳມະການຕິດຕາມ, ກວດກາ ຂອງສານປະຊາຊົນທ້ອງຖິ່ນ ປະກອບດ້ວຍ:**

| | |
|---|---|
| 1. ປະທານສານປະຊາຊົນທີ່ກ່ຽວຂ້ອງ | ເປັນປະທານ; |
| 2. ຫົວໜ້າຂະແໜງຈັດຕັ້ງ ແລະ ກວດກາ ສານປະຊາຊົນທີ່ກ່ຽວຂ້ອງ | ເປັນຮອງປະທານ; |
| 3. ຜູ້ຕາງໜ້າ ຄະນະປະທານ ສານປະຊາຊົນທີ່ກ່ຽວຂ້ອງຈຳນວນໜຶ່ງ | ເປັນກຳມະການ; |
| 4. ຜູ້ຕາງໜ້າ ອົງການຈັດຕັ້ງມະຫາຊົນ ສານປະຊາຊົນທີ່ກ່ຽວຂ້ອງ | ເປັນກຳມະການ. |

**ມາດຕາ 54 ສິດ ແລະ ໜ້າທີ່ ຂອງຄະນະກຳມະການ ຕິດຕາມ, ກວດກາ**

ຄະນະກຳມະການ ຕິດຕາມ, ກວດກາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ອອກລະບຽບການ ກ່ຽວກັບການ ຕິດຕາມ, ກວດກາ ການປະຕິບັດໜ້າທີ່ ແລະ ການປະພຶດຂອງຜູ້ພິພາກສາ;
2. ເປັນຜູ້ດຳເນີນການ ຕິດຕາມ, ກວດກາ ໃນການປະຕິບັດໜ້າທີ່ ແລະ ການປະພຶດ ຂອງຜູ້ພິພາກສາ;
3. ຕີລາຄາຄວາມສາມາດ ແຕ່ລະດ້ານໃນການດຳເນີນຄະດີ ແລະ ການປະພຶດຂອງຜູ້ພິພາກສາ;

4. ສັງລວມບັນຊີລາຍຊື່ຜູ້ພິພາກສາ ທີ່ຕ້ອງບຳລຸງຍົກລະດັບ ແລ້ວສົ່ງໃຫ້ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງປະທານສານປະຊາຊົນສູງສຸດ.

ການຕິດຕາມ, ກວດກາ ຜູ້ພິພາກສາ ຕ້ອງດຳເນີນຢ່າງໜ້ອຍປີລະຄັ້ງ.

**ມາດຕາ 55 ຮູບການ ການຕິດຕາມ, ກວດກາ**

ການຕິດຕາມ, ກວດກາ ມີ ສາມຮູບການ ດັ່ງນີ້:

1. ການຕິດຕາມ, ກວດກາ ປົກກະຕິ ຊຶ່ງແມ່ນ ການຕິດຕາມ, ກວດກາ ຕາມແຜນການທີ່ໄດ້ກຳນົດໄວ້;

2. ການຕິດຕາມ, ກວດກາ ໂດຍແຈ້ງໃຫ້ຮູ້ກ່ອນລ່ວງໜ້າ ຊຶ່ງແມ່ນ ການຕິດຕາມ, ກວດກາ ນອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງໄດ້ແຈ້ງໃຫ້ຜູ້ພິພາກສາທີ່ຖືກກວດການັ້ນ ຮູ້ກ່ອນລ່ວງໜ້າ;

3. ການຕິດຕາມ, ກວດກາ ກະທັນຫັນ ຊຶ່ງແມ່ນ ການຕິດຕາມ, ກວດກາ ໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ພິພາກສາທີ່ຖືກກວດການັ້ນ ຮູ້ກ່ອນລ່ວງໜ້າ.

## ໝວດທີ 2
## ການປະເມີນຜູ້ພິພາກສາ

**ມາດຕາ 56 (ປັບປຸງ) ການປະເມີນຜູ້ພິພາກສາ**

ການປະເມີນຜູ້ພິພາກສາ ແມ່ນ ການປະເມີນກ່ຽວກັບການປະຕິບັດໜ້າທີ່ ແລະ ການປະພຶດຂອງຜູ້ພິພາກສາ ຊຶ່ງດຳເນີນໂດຍຄະນະກຳມະການປະເມີນ.

**ມາດຕາ 57 ຄະນະກຳມະການປະເມີນ**

ຄະນະກຳມະການປະເມີນ ຖືກແຕ່ງຕັ້ງໂດຍປະທານສານປະຊາຊົນສູງສຸດ ຊຶ່ງປະກອບດ້ວຍ ຄະນະກຳມະການປະເມີນ ຂອງສານປະຊາຊົນສູງສຸດ ແລະ ສານປະຊາຊົນທ້ອງຖິ່ນ.

**ກ. ຄະນະກຳມະການປະເມີນ ຂອງສານປະຊາຊົນສູງສຸດ ປະກອບດ້ວຍ:**

| | |
|---|---|
| 1. ປະທານສານປະຊາຊົນສູງສຸດ | ເປັນປະທານ; |
| 2. ຫົວໜ້າກົມຈັດຕັ້ງ-ພະນັກງານ | ເປັນຮອງປະທານ; |
| 3. ຫົວໜ້າກົມກວດກາ | ເປັນກຳມະການ; |
| 4. ຫົວໜ້າກົມຄຸ້ມຄອງວິຊາການ ແລະ ສະຖິຕິສານ | ເປັນກຳມະການ; |
| 5. ຜູ້ຕາງໜ້າ ສະພາຜູ້ພິພາກສາ ຈຳນວນໜຶ່ງ | ເປັນກຳມະການ; |
| 6. ຫົວໜ້າ ຄະນະສານ ທີ່ກ່ຽວຂ້ອງ | ເປັນກຳມະການ; |
| 7. ຜູ້ຕາງໜ້າ ອົງການຈັດຕັ້ງມະຫາຊົນ | ເປັນກຳມະການ. |

**ຂ. ຄະນະກຳມະການປະເມີນ ຂອງສານປະຊາຊົນທ້ອງຖິ່ນ ປະກອບດ້ວຍ:**

| | |
|---|---|
| 1. ປະທານສານປະຊາຊົນທີ່ກ່ຽວຂ້ອງ | ເປັນປະທານ; |
| 2. ຫົວໜ້າຂະແໜງຈັດຕັ້ງ ແລະ ກວດກາ ສານປະຊາຊົນທີ່ກ່ຽວຂ້ອງ | ເປັນຮອງປະທານ; |
| 3. ຜູ້ຕາງໜ້າຄະນະປະທານ ຈຳນວນໜຶ່ງ | ເປັນກຳມະການ; |
| 4. ຜູ້ຕາງໜ້າ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ | ເປັນກຳມະການ; |
| 5. ຄະນະຈັດຕັ້ງຂັ້ນແຂວງ ຫຼື ຂັ້ນເມືອງ ທີ່ກ່ຽວຂ້ອງ | ເປັນກຳມະການ; |
| 6. ຄະນະກວດກາຂັ້ນແຂວງ ຫຼື ຂັ້ນເມືອງ ທີ່ກ່ຽວຂ້ອງ | ເປັນກຳມະການ; |

7. ຜູ້ຕາງໜ້າ ອົງການຈັດຕັ້ງມະຫາຊົນ ສານປະຊາຊົນທີ່ກ່ຽວຂ້ອງ ເປັນກຳມະການ.

**ມາດຕາ 58 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະກຳມະການປະເມີນ**

ຄະນະກຳມະການປະເມີນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າອອກລະບຽບການກ່ຽວກັບ ການປະເມີນການປະຕິບັດໜ້າທີ່ ແລະ ການປະພຶດ, ການຍ້ອງຍໍ ແລະ ການລົງວິໄນ;

2. ດຳເນີນການປະເມີນການປະຕິບັດໜ້າທີ່ ແລະ ການປະພຶດ ເພື່ອຍ້ອງຍໍ ແລະ ລົງວິໄນ;

3. ຂຶ້ນບັນຊີ ແລະ ລາຍງານຜູ້ມີຜົນງານ ແລະ ຜູ້ລະເມີດ ເພື່ອສະເໜີໃຫ້ປະທານສານປະຊາຊົນທີ່ກ່ຽວຂ້ອງ ພິຈາລະນາ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງປະທານສານປະຊາຊົນສູງສຸດ.

**ມາດຕາ 59 (ປັບປຸງ) ການດຳເນີນການປະເມີນ**

ການດຳເນີນການປະເມີນ ຜູ້ພິພາກສາ ໃຫ້ດຳເນີນຢ່າງໜ້ອຍ ໜຶ່ງຄັ້ງ ຕໍ່ປີ.

ລະບຽບການກ່ຽວກັບການດຳເນີນການປະເມີນຜູ້ພິພາກສາ ໄດ້ກຳນົດໄວ້ຕ່າງຫາກ.

## ພາກທີ IX
## ຂໍ້ຫ້າມ

**ມາດຕາ 60 (ປັບປຸງ) ຂໍ້ຫ້າມສຳລັບຜູ້ພິພາກສາ**

ຫ້າມ ຜູ້ພິພາກສາ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່ຕຳແໜ່ງ, ສິດອຳນາດ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນ, ໝູ່ຄູ່, ພັກພວກ ຫຼື ຍາດພີ່ນ້ອງຂອງຕົນ;

2. ບັງຄັບ ນາບຂູ່, ນຳໃຊ້ສິດ, ປະຕິບັດໜ້າທີ່ ເກີນຂອບເຂດ ຫຼື ລະເມີດລະບຽບການດຳເນີນຄະດີ;

3. ລຳອຽງ ຫຼື ເຂົ້າຂ້າງ ອອກຂາ ທີ່ພາໃຫ້ມີການຕັດສິນ ຫຼື ພິພາກສາຄະດີ ບໍ່ມີຄວາມຍຸຕິທຳ;

4. ກັກສຳນວນຄະດີ, ກົດໜ່ວງ ຖ່ວງດຶງ ເອກະສານ ເພື່ອຫາຜົນປະໂຫຍດ;

5. ເປີດເຜີຍຄວາມລັບ ກ່ອນການຕັດສິນ ຫຼື ພິພາກສາຄະດີ;

6. ທວງ, ຮຽກ, ໃຫ້ ຫຼື ຮັບເອົາ ສິນບົນ;

7. ເປັນທີ່ປຶກສາທາງດ້ານກົດໝາຍ, ພົວພັນກັບຄູ່ຄວາມ ເພື່ອຫາຜົນປະໂຫຍດ;

8. ປົກບັງ, ຊຸກເຊື່ອງເອກະສານ, ຫຼັກຖານທີ່ມີຢູ່ໃນສຳນວນຄະດີ;

9. ສ້າງກຸ່ມກ້ອນ, ເຄືອຂ່າຍ ແລະ ກະທຳສິ່ງໃດສິ່ງໜຶ່ງ ທີ່ພາໃຫ້ການພິຈາລະນາຕັດສິນຄະດີ ບໍ່ຖືກຕ້ອງ, ເປັນທຳ;

10. ຫຼິ້ນການພະນັນ ແລະ ດື່ມເຄື່ອງດື່ມທີ່ມີທາດເຫຼົ້າໃນໂມງລັດຖະການ;

11. ສັງກັດຢູ່ສານປະຊາຊົນດຽວກັນ ຫຼື ສານປະຊາຊົນຂັ້ນຖັດກັນ ກັບ ຜູ້ເປັນ ຜົວ ຫຼື ເມຍ, ລູກ, ຫຼານ ແລະ ສາຍຍາດທາງສາຍເລືອດຂັ້ນສາມ ຂອງຕົນ;

12. ມີພຶດຕິກຳອື່ນ ທີ່ຜິດຕໍ່ຈັນຍາບັນ, ຈັນຍາທຳ ແລະ ເປັນການລະເມີດກົດໝາຍ.

**ມາດຕາ 61 ຂໍ້ຫ້າມສໍາລັບຄະນະກໍາມະການ**

ຫ້າມ ຄະນະກໍາມະການ ມີພຶດຕິກໍາ ດັ່ງນີ້:

1. ລໍາອຽງ, ເຂົ້າຂ້າງ ອອກຂາ, ບິດເບືອນຄວາມຈິງ, ປົກປິດຂໍ້ມູນຄວາມຈິງ, ຮຽກຮ້ອງຜົນປະໂຫຍດ ຫຼື ຮັບສິນບົນ;
2. ແຊກແຊງ, ກ້າວກ່າຍ, ຂັດຂວາງ ການດໍາເນີນ ຫຼື ການພິຈາລະນາຕັດສິນຄະດີ;
3. ນາບຂູ່, ທໍາຮ້າຍ ຜູ້ພິພາກສາ;
4. ມີການກະທໍາ ທີ່ພາໃຫ້ຜູ້ພິພາກສາ ຕັດສິນຄະດີ ບໍ່ມີຄວາມເປັນທໍາ;
5. ໝິ່ນປະໝາດ, ໃສ່ຮ້າຍ ຜູ້ພິພາກສາ;
6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 62 ຂໍ້ຫ້າມສໍາລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີພຶດຕິກໍາ ດັ່ງນີ້:

1. ແຊກແຊງ, ກ້າວກ່າຍ ແລະ ຂັດຂວາງ ການດໍາເນີນ ແລະ ການພິຈາລະນາຕັດສິນຄະດີ;
2. ນາບຂູ່, ທໍາຮ້າຍ ຜູ້ພິພາກສາ;
3. ມີການກະທໍາ ທີ່ພາໃຫ້ການຕັດສິນຄະດີ ບໍ່ໄດ້ຮັບຄວາມເປັນທໍາ;
4. ໝິ່ນປະໝາດ, ປ້ອຍດ່າ, ນິນທາ, ໃສ່ຮ້າຍ ຜູ້ພິພາກສາ;
5. ປົກປິດ, ເຊື່ອງອໍາ, ທໍາລາຍຫຼັກຖານ ທີ່ກ່ຽວຂ້ອງກັບຄະດີ ຫຼື ປົກປ້ອງຜູ້ກະທໍາຜິດ;
6. ຍົກຍ້າຍຜູ້ພິພາກສາ ຂອງສານປະຊາຊົນໂດຍບໍ່ມີມະຕິ ຂອງຄະນະປະຈໍາສະພາແຫ່ງຊາດ;
7. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ X
## ເຄື່ອງແບບ, ກາໝາຍ ແລະ ບັດຂອງຜູ້ພິພາກສາ

**ມາດຕາ 63 ເຄື່ອງແບບຂອງຜູ້ພິພາກສາ**

ເຄື່ອງແບບຂອງຜູ້ພິພາກສາ ມີ ເຄື່ອງແບບ ຊຸດນັ່ງບັນລັງຕັດສິນ ແລະ ຊຸດທາງການຂອງສານ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍສານປະຊາຊົນ.

**ມາດຕາ 64 ກາໝາຍ ແລະ ບັດຂອງຜູ້ພິພາກສາ**

ກາໝາຍຂອງຜູ້ພິພາກສາ ມີ ທະນູບ່າ, ອິນທະນູຄໍ, ປ້າຍຊື່ ແລະ ເຄື່ອງໝາຍສານ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍສານປະຊາຊົນ.

ໃນການປະຕິບັດໜ້າທີ່ທາງການ ຜູ້ພິພາກສາ ມີບັດສະເພາະຂອງຕົນ.

# ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 65 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ຜູ້ພິພາກສາ ທີ່ໄດ້ປະຕິບັດກົດໝາຍສະບັບນີ້ ຢ່າງເຂັ້ມງວດ ເຮັດໃຫ້ການຕັດສິນ ແລະ ພິພາກສາຄະດີ ມີຄວາມຖືກຕ້ອງ ຍຸຕິທຳ ແລະ ຕັ້ງໜ້າພັດທະນາລະບົບສານປະຊາຊົນ ໃຫ້ມີປະສິດທິພາບ, ໂປ່ງໃສ ແລະ ທັນສະໄໝ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ບຸກຄົນອື່ນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ປະຕິບັດກົດໝາຍສະບັບນີ້ຢ່າງເຂັ້ມງວດ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 66 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ຜູ້ພິພາກສາ, ບຸກຄົນອື່ນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາຕາມກົດໝາຍ.

# ພາກທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ 67 ການຈັດຕັ້ງປະຕິບັດ**

ລັດຖະບານ, ຄະນະປະຈຳສະພາແຫ່ງຊາດ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ສານປະຊາຊົນສູງສຸດ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 68 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 16 ມັງກອນ 2024 ພາຍຫຼັງ ປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍຜູ້ພິພາກສາ ສະບັບເລກທີ 35/ສພຊ, ລົງວັນທີ 10 ພະຈິກ 2017.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ